ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 06 ຫາ 10 ມີນາ 2023



ກາກມັນຕົ້ນໝັກຢີສ ສຳລັບເປັນອາຫານສັດ ຫຼຸດຕົ້ນທຶນຊ່ວຍຊາວກະສິກອນ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ກາກມັນຕົ້ນໝັກຢີສ ສຳລັບເປັນອາຫານສັດ ທາງເລືອກເພື່ອຫຼຸດຕົ້ນທຶນແກ່ຊາວກະສິກອນ

ວາລະສານ ກະສິກຳ ແລະ ປ່າໄມ້ ສະບັບ ນີ້ ຂໍນຳສະເໜີ ການເຮັດອາຫານສຳລັບສັດ ເພື່ອຊ່ວຍ ລົດຕົ້ນທຶນໃນຍາມສະພາວະທີ່ຄ່າຫົວອາຫານສັດທີ່ ມີແນວໂນ້ມແພງຂຶ້ນຢ່າງໃນປັດຈຸບັນ ຫຼາຍທ່ານອາດ ຍັງບໍ່ທັນຮູ້ ແລະ ຍັງບໍ່ທັນໄດ້ລອງໃຊ້ວ່າດີ ແລະ ມີ ປະໂຫຍດແນວໃດ ສະນັ້ນ, ເຮົາມາທຳຄວາມຮູ້ຈັກ ກັບການເຮັດກາກມັນຕົ້ນໝັກ

ກາກມັນຕົ້ນ ແມ່ນຜົນພອຍໄດ້ຈາກຂະບວນ ການຜະລິດແປ້ງມັນຕົ້ນ ອາດຢູ່ໃນສະພາບປຽກ ຫຼື ແຫ້ງ (ຜົງ ແລະ ອັດເມັດ), ເຊິ່ງຍັງມີຄຸນຄ່າທາງ ອາຫານຢູ່ໂດຍສະເພາະໃນສ່ວນທີ່ເປັນຄາໂບໄຮ ເດຣດ ທີ່ຍ່ອຍງ່າຍປະມານ 65-70% ສາມາດນຳ ມາໃຊ້ເປັນວັດຖຸດິບອາຫານສັດໄດ້.

ຢີສ Yeast ຈຸລິນຊີ ຈຳພວກເຊື້ອຣາ ມີຢູ່ຫຼາຍ ສາຍພັນ ເຊັ່ນ ຢີສໝັກເຫຼົ້າ, ໝັກວາຍ, ເຮັດເຂົ້າໜົມ ປັງ ແລະ ອື່ນໆ

ວັດຖຸດິບ ແລະ ອຸປະກອນ ການເຮັດກາກມັນ ຕົ້ນໝັກຢີສປະກອບມີ:

1. ກາກມັນຕົ້ນ 1.000 ກິໂລກຼາມ;
2. ນ້ຳຕານ 1 ກິໂລກຼາມ;
3. ກາກນ້ຳຕານ 10 ລິດ;
4. ຜົງຢີສ 0,5 ກິໂລກຼາມ;
5. ປຸ໋ຍຢູເຣຍ (00-46-00) 5 ກິໂລກຼາມ; (ຖ້າຈະໃຫ້ງົວພໍ່ແມ່ພັນກິນ ແມ່ນບໍ່ຄວນໃສ່)
6. ຖັງໃສ່ນ້ຳ ຂະໜາດ 200 ລິດ;
7. ຖັງໃສ່ນ້ຳ ຂະໜາດ 20 ລິດ;
8. ຖົງຢາງດຳ 35 ຖົງ ແລະ ເປົາ 35 ໜ່ວຍ;
9. ຊ້ວານ ແລະ ອຸປະກອນ ຮັບໃຊ້ອື່ນໆ;

## ຂັ້ນຕອນຂະບວນການການຜະລິດ

1. ຂັ້ນຕອນການກະຕຸ້ນຢີສ: ໂດຍໃຫ້ນຳນ້ຳຕານ 1 ກິໂລກຼາມ ມາລະລາຍໃນນ້ຳສະອາດ 10 ລິດ ຄົນ ໃຫ້ລະລາຍດີແລ້ວໃສ່ຢີສ 0,5 ກິໂລກຼາມ ປະສົມໃຫ້



ເຂົ້າກັນດີປະໄວ້ປະມານ 10-20 ນາທີ ຫຼື ຈົນຍີສ ເກີດເປັນຟອງຂຶ້ນ.

2. ຂັ້ນຕອນການກະກຽມອາຫານຍີສ: ລະລາຍປຸ໋ຍຢູເຣຍ 5 ກິໂລກຼາມ ແລະ ກາກນ້ຳຕານ 10 ລິດ ໃນນ້ຳສະອາດ 100 ລິດ ໃຫ້ເຂົ້າກັນດີ

3. ເມື່ອຄົບເວລາທີ່ກຳນົດໄວ້ ນຳເອົານ້ຳຍີສທີ່ປະສົມໄວ້ ເທລົງໃນຖັງອາຫານລ້ຽງເຊື້ອທີ່ກຽມໄວ້ ແລະ ເຕີມອອກຊີເຈນດ້ວຍການຄົນ ແລ້ວປະໄວ້ປະມານ 30 ນາທີ

4. ບັນຈຸກາກມັນຕົ້ນລົງໃນອ່າງ ຫຼື ຖັງ ຫຼື ເປົາທີ່ມີຖົງຢ່າງດຳຮອງດ້ານໃນ

5. ໃສ່ກາກມັນຕົ້ນໃນອ່າງ ຫຼື ຖັງທີ່ກຽມໄວ້ ແລະ ເທນ້ຳໝັກຍີສທີ່ປະສົມແລ້ວລົງໃສ່ ຈາກນັ້ນ ປິດບໍ່ໃຫ້ອາກາດເຂົ້າ ປະໄວ້ ປະມານ 10-20 ວັນ ຈຶ່ງເອົາໄປເກືອສັດ (ໝັກໄວ້ດົນທາດໂປຣຕີນຈະສູງຂຶ້ນ ເຊັ່ນໄລຍະເວລາໝັກ 10 ວັນ ຈະມີປະລິມານໂປຣຕີນ 12%, ໝັກໄວ້ 20 ວັນ ຈະມີປະລິມານໂປຣຕີນ 16%, ໝັກໄວ້ 30 ວັນ ຈະມີປະມານໂປຣຕີນເພີ່ມຂຶ້ນ 20%), ລົການສັງເກດມັກຕົ້ນໝັກຍີສທີ່ດີ ຕ້ອງມີລັກສະນະສີນ້ຳຕານ, ເວລາດົມຈະມີກິ່ນຫອມກາກນ້ຳຕານປະສົມແອມໂມເນຍ ແລະ ມີລົດສົ້ມເລັກນ້ອຍ.

ກາກມັນຕົ້ນໝັກຍີສ ສາມາດໃຊ້ເປັນອາຫານຂອງງົວ, ຄວາຍ, ແບ້, ໝູ ແລະ ສັດປີກໄດ້ ໂດຍແນະນຳການໃຊ້ດັ່ງນີ້:

- ສຳລັບງົວແມ່ນສາມາດໃຊ້ເປັນອາຫານຫຼັກ ໂດຍໃຫ້ກິນເຕັມທີໄດ້
- ສຳລັບໝູ ແມ່ນໃຫ້ໃຊ້ເປັນສ່ວນປະສົມໃນອາຫານສຳລັບໝູແມ່ພັນ ແລະ ໝູລຸ້ນ-ຂຸນ ນ້ຳໜັກຕັ້ງແຕ່ 40 ກິໂລກຼາມ ຂຶ້ນໄປ ໃຫ້ໃນອັດຕາສ່ວນເຂັ້ມຂຸ້ນ 1 ສ່ວນ ຕໍ່ກາກມັນຕົ້ນໝັກຍີສ 2-5 ສ່ວນ
- ສຳລັບສັດປີກ ແນະນຳໃຫ້ໃຊ້ໃນຊ່ວງໄລຍະກາງ ໂດຍປະສົມກັບອາຫານທີ່ໃຊ້ມາກ່ອນ ແລະ ປັບປະລິມານເພີ່ມຂຶ້ນຕາມຄວາມເໝາະສົມ.

## ສົມທຽບຄຸນຄ່າທາງດ້ານອາຫານຂອງກາກມັນຕົ້ນໝັກຢີສ

| ອົງປະກອບທາງເຄມີ | ກາກມັນຕົ້ນໝັກຢີສ | ກາກມັນຕົ້ນສົດ |
|---|---|---|
| ຄວາມຊຸ່ມ | 79,1% | 70,3% |
| ທາດຊີ້ນ | 16,4% | 2,8% |
| ພະລັງງານ | 2,5 Mcal/Kg | 2,8 Mcal/Kg |
| ເຍື່ອໄຍ % | 20,7% | 21,9% |








ແຫຼ່ງຂໍ້ມູນຈາກ: ສູນຄົ້ນຄວ້າການລ້ຽງສັດ, ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະ ນາຊົນນະບົດ.

ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ນ. ສຸດາຄຳ ພິມມະສອນ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳມອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;